ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ

ເລກທີ 241 /ຄຊກລ.ຫກ.ຄພ
ນະຄອນຫລວງວຽງຈັນ, ວັນທີ: 25 JUL 2018...

## ໜັງສືຢັ້ງຢືນ

- ອີງໃສ່ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 67/ລບ ລົງວັນທີ 12/03/2018 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.
- ອີງຕາມໜັງສືສະເໜີບໍລິສັດນ້ຳງຽບ 1 ຈຳກັດ, ສະບັບເລກທີ NNP1 –LT-NRA- 571, ລົງວັນ 12 ມິຖຸນາ 2018.
- ອີງຕາມບົດລາຍງານລົງກວດກູ້ຄວບຄຸມຄຸນນະພາບເນື້ອທີ່ຕິດຕັ້ງເຄື່ອງວັດແທກນ້ຳຝົນ ແລະ ການຂຶ້ນລົງຂອງນ້ຳງຽບ 1 ສະບັບເລກທີ 239/ຫຄຊກລ ລົງວັນທີ 24/ກໍລະກົດ/2018.

ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ຂໍຢັ້ງຢືນວ່າ: ທີມກວດກາ ແລະ ຄວບຄຸມຄຸນນະພາບຫ້ອງການ ຄຊກລ ຈຳນວນ 1 ທີມງານ ໄດ້ລົງກວດກູ້ລະເບີດຈຸດທີ່ຕັ້ງເຄື່ອງວັດແທກປະລິມານນ້ຳຝົນ ແລະ ວັດແທກການຂຶ້ນ-ລົງຂອງນ້ຳງຽບ1 ຈຸດທີ່ 1 ບ້ານ ທ່າວຽງໄຊ, ເມືອງ ທ່າໂທມ, ແຂວງ ໄຊສົມບູນ, ລາຍລະອຽດມີເນື້ອທີ່ດັ່ງນີ້: ກ້ວາງ 3X3 ແມັດ, ລວງຍາວ 1X30 ແມັດ, ແລະ ຈຸດທີ່ 2 ບ້ານ ຊົມຊື່ນ ເມືອງ ບໍລິຄັນ ແຂວງ ບໍລິຄຳໄຊ ລາຍລະອຽດດັ່ງນີ້: 3X3 ແມັດ, ລວງຍາວ 1X15 ແມັດ, ສະນັ້ນຫ້ອງການ ຄຊກລ ຂໍຢັ້ງຢືນວ່າຈຳນວນສອງພື້ນທີ່ດັ່ງກ່າວແມ່ນມີຄວາມປອດໄພນຳໃຊ້ຕາມຈຸດປະສົງ.

ດັ່ງນັ້ນ, ຈິ່ງອອກໜັງສືຢັ້ງຢືນສະບັບນີ້ໄວ້ເປັນຫຼັກຖານ.

ຫົວໜ້າຫ້ອງການ.

ຫ້ອງການ ຄຊກລ

ບຸນເພັງ ສີສະ...
Mr.Bounpheng SISAWATH

ບ້ານ ສີສັງວອນ,ເມືອງໄຊເສດຖາ, ໄປສະນີ 7261,ນະຄອນຫຼວງວຽງຈັນ, ໂທ: (856 – 21) 262386,262416,ແຟັກ (856 -21) 262396,ທີ່ຢູ່ອີເມວລ໌. UXO,NRA @gmail.com; ເວັບໄຊ www.nra.gov.la

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້
ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ
ຫ້ອງການ

ເລກທີ:...2..3..9.../ຄຊກລ.ຫກ.ຄພ
ນະຄອນຫຼວງວຽງຈັນ, ວັນທີ.....24 JUL 2018..........

## ບົດລາຍງານ

## ຜົນການລົງກວດກູ້ແລະ ຄວບຄຸມຄຸນນະພາບເນື້ອທີ່ຕິດ ຕັ້ງເຄື່ອງວັດແທກນ້ຳຝົນ ແລະ ການຂຶ້ນລົງຂອງນ້ຳງຽບ 1.

I. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການ ຄຊກລ ສະບັບເລກທີ 232/ຫຄຊກລ ລົງວັນທີ 18 ກໍລະກົດ 2018 ເພື່ອລົງກວດກູ້ເນື້ອທີ່ບ່ອນຕັ້ງເຄື່ອງວັດແທກປະລິມານນ້ຳຝົນ ແລະ ວັດແທກການຂຶ້ນ-ລົງ ຂອງນ້ຳງຽບ1 ແຕ່ ວັນທີ 21 ຫາ 22 ເດືອນ ກໍລະກົດ 2018.

ຄະນະທີມງານກວດກາຄຸນນະພາບມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ບຸນທະວີ ແກ້ວວິໄລ, ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.
2. ທ່ານ ບຸນຮຽງ ສຸກຈັນທະລາວົງ, ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.
3. ທ່ານບຸນປອນ ທຳມະວົງສາ, ແພດປະຈຳໜ່ວຍງານຫ້ອງການ ຄຊກລ.
4. ທ່ານ ພູວົງ ສີສະໜັກ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.
5. ທ່ານ ວົງແສງ ສີສຸລິດ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ.
6. ທ່ານ ນໍລະວົງ  ວົງສີນວນ ວິຊາວະກອນກໍ່ສ້າງບໍລິສັດນ້ຳງຽບ 1 ຈຳກັດ.

II ລາຍລະອຽດ

ໜ່ວຍງານມາດຕະຖານ ແລະ ຄ້ຳປະກັນຄຸນນະພາບລົງເຄື່ອນໄຫວວຽກງານກວດກູ້ລະເບີດອອກຈາກ ຈຸດທີ່ຕັ້ງເຄື່ອງວັດແທກປະລິມານນ້ຳຝົນ ແລະ ວັດແທກການຂຶ້ນ-ລົງ ຂອງນ້ຳງຽບ1 ຈຸດທີ່1 ບ້ານ ທ່າວຽງໄຊ ເມືອງ ທ່າໂທມ, ແຂວງ ໄຊສົມບູນ, ລາຍລະອຽດມີເນື້ອທີ່ດັ່ງນີ້: ກ້ວາງ 3X3 ແມັດ, ລວງຍາວ 1X30 ແມັດ, ແລະ ຈຸດທີ່ 2 ບ້ານ ຊົມຊື່ນ ເມືອງ ບໍລິຄັນ ແຂວງ ບໍລິຄຳໄຊ ລາຍລະອຽດດັ່ງນີ້: 3X3 ແມັດ, ລວງຍາວ 1X15 ແມັດ, ນຳໃຊ້ເຄື່ອງ PIDD ແລະ LARGLOOP 740M, ຜ່ານການກວດກູ້ຕົວຈິງເຫັນວ່າທັງສອງສະ ໜາມດັ່ງກ່າວແມ່ນບໍ່ພົບສິ້ນສ່ວນທີ່ເປັນອັນຕະລາຍ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ.

ຫົວໜ້າຫ້ອງການ ຄຊກລ

ບຸນເພັງ ສີສະຫວັດ
Mr.Bounpheng SISAWATH

ຫົວໜ້າໜ່ວຍງານ
ມາດຕະຖານ ແລະ ຄ້ຳປະກັນຄຸນນະພາບ